ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມສົ່ງເສີມການລົງທຶນທົ່ວໄປ ເລກທີ 0530 /ສລທ.ຂດ

ນະຄອນຫຼວງວຽງຈັນ, ວັນທີ 28 ພຶດສະພາ 2012

ຮຽນ/ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

ເລື່ອງ: ການມອບວຽກບໍລິການຂຶ້ນທະບຽນວິສາຫະກິດ ແລະ ການຄັວດກາປະທັບຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ

ເພື່ອໃຫ້ການກະຈາຍວຽກງານການບໍລິການຂຶ້ນທະບຽນວິສາຫະກິດ ໃຫ້ລົງເຖິງທ້ອງຖິ່ນຮາກຖານ ຕາມແຈ້ງການກ່ຽວກັບແບ່ງຂັ້ນຄຸ້ມຄອງຂອງກະຊວງອຸດສາຫະກຳ ແລະການຄ້າ, ສ້າງບາດກ້າວທີ່ເປັນຮູບປະທຳ ໃນການຈັດຕັ້ງປະຕິບັດນະໂຍບາຍ 3 ສ້າງຂອງຂັ້ນເທິງ ໃຫ້ເປັນໄປຢ່າງຄ່ອງຕົວ.

ກົມສົ່ງເສີມການລົງທຶນທົ່ວໄປ ຂໍຖືເປັນກຽດແຈ້ງໃຫ້ ຊາບ ແລະ ກະກຽມປະຕິບັດ ດັ່ງນີ້:

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ພິຈາລະນາຄວາມພ້ອມໃນການຮັບວຽກບໍລິການຂຶ້ນທະບຽນວິສາຫະກິດ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແຕ່ລະເມືອງໃຫ້ຄົບຖ້ວນ ກ່ອນມອບ ;

2. ການມອບ - ຕ້ອງຮັບປະກັນຈິດໃຈ ຫລື ເງື່ອນໄຂ ດັ່ງນີ້ :

- ຕ້ອງເຮັດໃຫ້ການຂຶ້ນທະບຽນວິສາຫະກິດ ເພື່ອປະກອບທຸລະກິດ ຂອງປະຊາຊົນບັນດາເຜົ່າ ມີສະດວກງ່າຍດາຍ ວ່ອງໄວ ແລະ ເຫັນໄດ້ການຫັນປ່ຽນສູ່ສະພາວະໃໝ່ຢ່າງຊັດເຈນ ;
- ຫ້ອງການອຸດສາຫະກຳ ແລະການຄ້າເມືອງ ທີ່ຖືກມອບຕ້ອງມີຄວາມພ້ອມ ພະແນກກໍຕ້ອງ ຊ່ວຍຈົນໃຫ້ແນ່ໃຈໃນປະສິດທິຜົນຂອງວຽກ ບໍ່ຄວນມອບແບບສະເລ່ຍກັນໄປໃນແຕ່ລະເມືອງ;

3. ໃຫ້ພະແນກປະກອບເອກະສານ ທາງກົມຈັດຕັ້ງ ແລະພະນັກງານ ເພື່ອຂໍຄັວດກາປະທັບເຈົ້າໜ້າທີ່ທະບຽນວິສາຫະກິດຂອງເມືອງທີ່ໄດ້ມອບ ຫລື ທີ່ຈະມອບວຽກບໍລິການຂຶ້ນທະບຽນວິສາຫະກິດໃຫ້. ໃນກໍລະນີ ຈຳເປັນຕ້ອງມອບ ຫລືໄດ້ມອບ ແຕ່ຍັງບໍ່ທັນມີກາປະທັບ ກໍໃຫ້ເມືອງໃຊ້ກາປະທັບຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ໂດຍອະນຸໂລມໄປກ່ອນກໍໄດ້ ຈົນກວ່າໄດ້ມີກາປະທັບເຈົ້າໜ້າທີ່ທະບຽນວິສາຫະກິດຂອງເມືອງ.

ຫົວໜ້າກົມສົ່ງເສີມການລົງທຶນທົ່ວໄປ

ດຣ.ສົມພວາ ພຸມພິມິດ